ຂໍ້ຕົກລົງ

ລະຫວ່າງລັດຖະບານສາທາລະນະລັດປະຊາຊົນຈີນແລະ
ລັດຖະບານພະລາຊອານາຈັກລາວກ່ຽວກັບການສ້າງຖະໜົນເສັ້ນນຶ່ງ

=-=-=-=-=

ລັດຖະບານສາທາລະນະລັດປະຊາຊົນຈີນແລະລັດຖະບານພະລາຊອານາຈັກລາວ ໂດຍປະຕິບັດຕາມຜົນສົນທະນາຮ່ວມເມື່ອວັນທີ ໒໔ ເມສາ ໑໙໖໒ ລະຫວ່າງທ່ານ ຈູເອີນລາຍ ນາຍົກລັດຖະມົນຕີ ລັດຖະບານສາທາລະນະລັດປະຊາຊົນຈີນ ແລະ ສເດັດເຈົ້າສຸວັນນະພູມາ ນາຍົກລັດຖະມົນຕີລັດຖະບານພະລາຊອານາຈັກລາວແລະເພື່ອຂະຫຍາຍສາຍພົວພັນທາງເສດຖະກິດລະຫວ່າງສອງປະເທດຈຶ່ງໄດ້ຕົກລົງສ້າງຖະໜົນເສັ້ນນຶ່ງແຕ່ແຂວງຢູນນານເມືອງຈີນເຖິງແຂວງຜົ້ງສາລີພະລາຊອານາຈັກລາວ. ດ້ວຍເຫດນີ້ລັດຖະບານທັງສອງໄດ້ຕົກລົງທຳຂໍ້ຕົກລົງສະບັບນີ້ແລະໄດ້ແຕ່ງຕັ້ງຜູ້ຕາງໜ້າມີອຳນາດເຕັມແຕ່ລະຝ່າຍດັ່ງນີ້ :

- ລັດຖະບານສາທາລະນະລັດປະຊາຊົນຈີນ : ໄດ້ແຕ່ງຕັ້ງຜູ້ຕາງໜ້າການເສດຖະກິດແລະວັດທະນະທຳສາທາລະນະລັດປະຊາຊົນຈີນປະຈຳພະລາຊອານາຈັກລາວ, ຄື ທ່ານ ໂຮເຕ,
- ລັດຖະບານພະລາຊອານາຈັກລາວ : ລັດຖະມົນຕີກະຊວງເສດຖະກິດແລະແຜນການ, ຄື ພະນະທ່ານເຈົ້າສີສຸມັງ ສີສະເລີມສັກ.

ບັນດາທ່ານຜູ້ມີອຳນາດເຕັມທີ່ກ່າວເຖິງນີ້, ພາຍຫຼັງທີ່ໄດ້ກວດເບິ່ງໜັງສືມອບອຳນາດຂອງກັນແລະກັນເຫັນຖືກຕ້ອງແລ້ວ, ໄດ້ຕົກລົງກັນຕາມມາດຕາຕໍ່ໄປນີ້ :

ມາດຕາ ໑

ລັດຖະບານສາທາລະນະລັດປະຊາຊົນຈີນແລະລັດຖະບານພະລາຊອານາຈັກລາວໄດ້ຕົກລົງກັນສ້າງຖະໜົນເສັ້ນນຶ່ງແຕ່ເມືອງ ລາ, ແຂວງ ຢູນນານ ໃນເມືອງຈີນ ເຖິງ ເມືອງຜົ້ງສາລີແຂວງຜົ້ງສາລີ ໃນເມືອງລາວ ໂດຍຜ່ານ ບໍ່ນຈອງ ແລະ ບ້ານເກີນໄຊ ໃນດິນຈີນ ແລະ ເມືອງບຸນເໜືອ ແຂວງຜົ້ງສາລີໃນດິນລາວ. ຄວາມຍາວທັງໝົດຂອງຖະໜົນເສັ້ນນີ້ມີປະມານ ໑໐໔ ກິໂລແມດ. ໃນນັ້ນຕອນທີ່ຜ່ານດິນຈີນຍາວປະມານ ໒໗ ກິໂລແມດ ແລະ ຕອນທີ່ຜ່ານດິນລາວຍາວປະມານ ໗໗ ກິໂລແມດ. ລັດຖະບານສາທາລະນະລັດປະຊາຊົນຈີນເຫັນດີຮັບປະຕິບັດທຸກໆວຽກງານກ່ຽວກັບການສ້າງຖະໜົນທີ່ກ່າວນີ້.

ມາດຕາ ໒

ລັດຖະບານສາທາລະນະລັດປະຊາຊົນຈີນເຫັນດີຈ່າຍຄ່າອຸປະກອນເພື່ອວຽກງານຂອງການສ້າງຖະໜົນຕອນຜ່ານດິນລາວໃຫ້ເປັນການຊ່ວຍເຫຼືອທາງດ້ານເສດຖະກິດຂອງລັດຖະບານສາທາລະ

ນະຣັດປະຊາຊົນຈີນໃຫ້ແກ່ຣັຖະບານພະຣາຊອານາຈັກລາວໂດຍບໍ່ມີສ່ວນຕອບແທນແລະເງື່ອນໄຂໃດໆ. ຣາຄາທັງໝົດຂອງການຊ່ວຍເຫຼືອອັນນີ້ຈະກຳນົດຕາມຄວາມຕ້ອງການຕົວຈິງໃນການສ້າງຖົນົນຕອນນີ້ແລະຈະແນ່ນອນໃນການທີ່ເງິນຂອງທອງຄຳທີ່ຈະສຳລະລະຫວ່າງກັນພາຍຫຼັງການສ້າງຖົນົນຕອນນີ້ເສັດແລ້ວ.

ມ າ ຕ າ ໓

ເພື່ອການກໍ່ສ້າງຖົນົນທີ່ກ່າວ, ຣັຖະບານສາທາຣະນະຣັດປະຊາຊົນຈີນເຫັນດີຮັບສົ່ງບັນດາຜູ້ຊ່ຽວຊານ, ນາຍຊ່າງ, ຊ່າງແຕກຕ່າງແລະກຳມະກອນພ້ອມທັງເຄື່ອງຈັກ, ວັດຖຸກໍ່ສ້າງ, ລົດແລະຈັດພາຫະນະທີ່ຕ້ອງການໃນການກໍ່ສ້າງເພື່ອທຳງານໃນແຂວງຜົ້ງສາລີເມືອງລາວ. ເພື່ອອຳນວຍຄວາມສະດວກໃນວຽກງານກໍ່ສ້າງ, ຝ່າຍພະຣາຊອານາຈັກລາວຍິນດີຮັບໃຫ້ຄວາມຮ່ວມໄມ້ຮ່ວມມືແລະຄວາມສະດວກທຸກປະການທີ່ຕົນສາມາດໃຫ້ໄດ້ແລະຮັກສາຄວາມປອດໄພໃຫ້ແກ່ບັນດາຜູ້ທີ່ກ່າວອ້າງບົນນີ້.

ມ າ ຕ າ ໔

ນອກຈາກນີ້ຣັຖະບານພະຣາຊອານາຈັກລາວເຫັນດີຮັບໃຫ້ເຈົ້າໜ້າທີ່ຜົ້ງສາລີອະນຸມັດໃຫ້, ໄມ້, ໄມ້ໄຜ່ແລະວັດຖຸອື່ນໆທີ່ຈະສາມາດຈະຫາໄດ້ປະຈຳທີ່, ທີ່ຕ້ອງການສຳລັບການສ້າງຖົນົນຕອນຜ່ານດິນລາວ.

ມ າ ຕ າ ໕

ສອງຝ່າຍໄດ້ຕົກລົງໃຫ້ບັນຫາຕົວຈິງກ່ຽວກັບການສ້າງຖົນົນເສັ້ນນີ້ຮັບການແກ້ໄຂປະຈຳທີ່ດ້ວຍການປຶກສາຫາຣືລະຫວ່າງກົງສຸນໃຫຍ່ສາທາຣະນະຣັດປະຊາຊົນຈີນປະຈຳຜົ້ງສາລີແລະເຈົ້າໜ້າທີ່ຜົ້ງສາລີ ຫຼືລະຫວ່າງກົງສຸນໃຫຍ່ພະຣາຊອານາຈັກລາວປະຈຳຄຸນໝິງແລະພະແນກການຕ່າງປະເທດຂອງອົງການປົກຄອງປະຊາຊົນແຂວງຢູນນານ.

ມ າ ຕ າ ໖

ອົດຕະກລາສະບັບນີ້ໃຊ້ໄດ້ນັບແຕ່ວັນເຊັນສັນຍາເປັນຕົ້ນໄປ.

ທຳເປັນສອງສະບັບທີ່ຈັງໄຂ, ວັນທີ ເດືອນມົກຣາ ໑໙໖໒ ແຕ່ລະສະບັບເປັນພາສາຈີນ, ລາວ ແລະ ຝຣັ່ງເສດ, ທັງສາມພາສາໃຊ້ເປັນຫຼັກຖານໄດ້ເທົ່າທຽມກັນ.

| | |
|---|---|
| ຜູ້ຕາງໜ້າມີອຳນາດເຕັມ | ຜູ້ຕາງໜ້າມີອຳນາດເຕັມ |
| ຂອງຣັຖະບານສາທາຣະນະຣັດປະຊາຊົນຈີນ, | ຂອງຣັຖະບານພະຣາຊອານາຈັກລາວ, |
| 何 伟 | |